# ພັທນາຄວາມສໍານິສໍານານໃນການປາກເວົ້າຂອງເດັກ ອາຍຸ 0-3 ປີ

ມັນແມ່ນຈໍານວນການໂອ້ລົມທັມດາແຕ່ລະມື້ທີ່ທ່ານລົມກັນກັບລູກຂອງທ່ານທີ່ເຮັດໃຫ້ຮຽນໄດ້ດີແຕກຕ່າງກັນທຸກຢ່າງ, ກະທັ້ງກ່ອນແຕ່ລູກຂອງທ່ານສາມາດປາກໄດ້.

ເດັກນ້ອຍອ່ອນແລະເດັກນ້ອຍຜູ້ໜຸ່ມນ້ອຍຮຽນຮູ້ປາກເວົ້າ (ສົ່ງແລະຮັບເອົາຂໍ້ຄວາມກັບຄົນອື່ນ) ກ່ອນໜ້າຍາວນານທີ່ພວກຂະເຈົ້າຮຽນປາກ. ພວກຂະເຈົ້າເຂົາຮຽນປາກເວົ້າໃນຣະຍະການພົວພັນໃນແຕ່ລະມື້ກັບຄົນທີ່ຢູ່ອ້ອມແອ້ມພວກຂະເຈົ້າ. ພວກຂະເຈົ້າມອງເບິ່ງແລະຟັງຄົນອື່ນພ້ອມກັບໃຊ້ທ່າທາງຕີນມືເພື່ອຊີ້ແຈງຄວາມຕ້ອງການຂອງພວກຂະເຈົ້າ, ຄວາມຮູ້ສຶກແລະຄວາມປະສົບການ.

ຄວາມສໍານິສໍານານອັນດີງາມແລະຕົ້ນໆໃນການປາກເວົ້ານໍາພາໄປສູ່ພາສາແລະການຮູ້ໜັງສືທີ່ຈົບດີ (ການຂຽນອ່ານ).

ເດັກນ້ອຍອ່ອນເລື້ອຍໆໄປ:
ຟັງ - ກະທັ້ງຢູ່ໃນມົດລູກ
ເບິ່ງ - ຕາຈັບຕາເປັນສິ່ງສໍາຄັນຫຼາຍກ່ອນເດັກຈະປາກເວົ້າ
ການສະແດງໜ້າຕາ - ໜ້າຕາທີ່ໂລດຜົນເຮັດໃຫ້ເດັກນ້ອຍສົນຈິດສົນໃຈ

## ການເຕີບໂຕຂອງສະໝອງ

ສາມປີຕົ້ນຂອງຊີວິດຂອງລູກຂອງທ່ານແມ່ນເມື່ອທີ່ສະໝອງຂອງພວກຂະເຈົ້າເຕີບໂຕແລະພັທນາຂຶ້ນກ່ວາໃນເວລາອື່ນໆໃນຊີວິດຂອງພວກຂະເຈົ້າ.

ມັນກໍເປັນເວລາຣະດັບເອກສໍາຮັບສະໝອງຂອງລູກຂອງທ່ານເພື່ອຮຽນຮູ້, ເບິ່ງ, ແລະຟັງ. ເດັກນ້ອຍອ່ອນຕ້ອງການເຫັນການເໜັງຕີງ, ຮູບຮ່າງ, ສີ, ແລະສິ່ງຂອງ (ຢູ່ໃກ້ໆແລະໄກ) ເພື່ອສະໝອງຂອງພວກຂະເຈົ້າຈະຮຽນຮູ້ວ່າຈະເຫັນໄດ້ແບບໃດ. ເດັກນ້ອຍອ່ອນກໍຕ້ອງການໄດ້ຍິນສຽງຕ່າງໆຢ່າງມາກມາຍເພື່ອພວກຂະເຈົ້າຈະພັທນາການຟັງແລະເຂົ້າໃຈສຽງ.

ເວລາຣະດັບເອກເພື່ອພັທນາແລະຮຽນປາກເວົ້າແມ່ນໃນສອງສາມປີຕົ້ນຂອງຊີວິດ. ເດັກນ້ອຍຕ້ອງການໄດ້ຍິນທ່ານປາກເວົ້າ, ຮ້ອງເພງແລະອ່ານໜັງສືໃຫ້ພວກຂະເຈົ້າຟັງໃນທຸກເວລາ. ພວກຂະເຈົ້າກໍ້ຕອງການໃຫ້ທ່ານປາກເວົ້າກັບພວກຂະເຈົ້າເມື່ອພວກຂະເຈົ້າປາກເບີະໆບະໆຢູ່ແລະພະຍາຍາມ
ກ່າຍການປາກເວົ້າຂອງທ່ານ.

## ທ່ານເປັນນາຍຄູຄົນທໍາອິດທີ່ສໍາຄັນທີ່ສຸດຂອງເດັກຂອງທ່ານ

- ໃຫ້ຟັງສຽງຂອງລູກຂອງທ່ານ
- ໃຫ້ປາກເວົ້າກັບລູກຂອງທ່ານ
- ໃຫ້ໃຊ້ເພງແລະທໍານອງນໍາກັນ
- ໃຫ້ອ່ານປຶ້ມນໍາກັນ
- ໃຫ້ໄປບາງແຫ່ງໃໝ່ນໍາກັນ
- ໃຫ້ເອົາສິ່ງຂອງອັນແຕກຕ່າງກັນຢ່າງມາກມາຍຈາກການຫຼິ້ນເຮືອນນ້ອຍໃຫ້ພວກຂະເຈົ້າ
- ໃຫ້ບອກໃຫ້ພວກຂະເຈົ້າຮູ້ເມື່ອພວກຂະເຈົ້າເຮັດໄດ້ດີ

ໃຫ້ຈົດຈຳວ່າ:
ການຫຼິ້ນກັບລູກຂອງທ່ານ ເປັນການບອກສອນພວກຂະເຈົ້າປາກເວົ້າ. ທໍຣະພາບແລະເກມແລະ ໂປຼແກຼມຂອງຄອມພິວເຕີ, ດີວີດີ ແລະແຟຼດຄາດ (flashcard), ກະທັ້ງທີ່ເປັນການບອກສອນກໍຕາມ, ມັນບໍ່ໄດ້ຊິດຊ່ວຍ ເດັກນ້ອຍພັທນາຄວາມສຳນິສຳນານການປາກເວົ້າຂອງພວກຂະເຈົ້າ. ມັນແມ່ນໂດຍການ ປາກເວົ້າກັບຄົນເຮົາເທົ່ານັ້ນທີ່ເດັກນ້ອຍສາມາດພັທນາຄວາມສຳນິສຳນານການປາກເວົ້າຂອງພວກຂະເຈົ້າ.

